WOMEN'S INTERNATIONAL NETWORK
RÉSEAU INTERNATIONAL DE FEMMES
RED INTERNACIONAL DE MUJERES

AMARC WIN

# ນະໂຍບາຍດ້ານບົດບາດຍິງ-ຊາຍ

# ສໍາລັບສະຖານີວິທະຍຸຊຸມຊົນ

## ໂດຍ AMARC-WIN Asia Pacific

## 8 ມີນາ 2008











# ບົດນຳ

ຄວາມສະເໝີພາບແລະບົດບາດສຳຄັນຂອງແມ່ຍິງໃນທຸກໆການເຄື່ອນໄຫວຂອງມວນມະນຸດ ໄດ້ຖືກຮັບຮູ້ແລະຍອມຮັບ ໂດຍອີງກອນສາກົນ, ລັດຖະທຳມະນູນແຫ່ງຊາດ ແລະ ສັງຄົມໃນທົ່ວໂລກ.

ສິດທິຂອງທຸກຄົນ ໂດຍບໍ່ຈຳແນກເພດ, ເຊື້ອຊາດ ແລະ ສາດສະໜາ ໄດ້ຖືກຍອມຮັບພາຍໃຕ້ ຖະແຫລງການສາກົນ ວ່າດ້ວຍສິດທິມະນຸດ (The Univeral Declaration of Human Rights). ນອກຈາກນັ້ນ, ລັດຖະບານຍັງໄດ້ຮັບຮູ້ສິດທິ ຂອງແມ່ຍິງ ພາຍໃຕ້ສົນທິສັນຍາວ່າດ້ວຍການລົບລ້າງ ການເລືອກປະຕິບັດ ທີ່ບໍ່ເປັນທຳຕໍ່ແມ່ຍິງ (CEDAW). ພາຍໃຕ້ສົນທິສັນຍາດັ່ງກ່າວ, ລັດຖະບານມີໜ້າທີ່ໃນການຈັດຕັ້ງປະຕິບັດແຜນການທີ່ເປັນຮູບເປັນຮ່າງ ໂດຍປະຕິບັດຕາມ 3 ຫລັກການ ນັ້ນຄື: ຄວາມສະເໝີພາບ, ການບໍ່ເລືອກປະຕິບັດ ແລະ ການມີພັນທະຂອງລັດ.

ບົດບາດຂອງສື່ໃນການສົ່ງເສີມຄວາມສະເໝີພາບຂອງແມ່ຍິງ ເປັນສິ່ງທີ່ສຳຄັນ. ມັນໄດ້ຖືກຮັບຮູ້ໃນມາດຕາ J ຂອງນະໂຍບາຍປັກກິ່ງສຳລັບແມ່ຍິງ (Section J of the Beijing Platform for Women) ໂດຍຖືກນຳໃຊ້ຢ່າງເປັນມະຕິໃນປີ 1995. ໃນມາດຕາດັ່ງກ່າວໄດ້ເວົ້າເຖິງການມີສ່ວນຮ່ວມຢ່າງຕື່ນຕົວຂອງແມ່ຍິງໃນສື່, ແຕ່ວ່າແມ່ຍິງພັດບໍ່ໄດ້ຢູ່ໃນຕຳແໜ່ງທີ່ມີອຳນາດໃນການຕັດສິນໃຈ ໃນສື່ທຸກໆຮູບແບບ. ມັນຍັງໄດ້ຊີ້ໃຫ້ເຫັນຄວາມຈຳເປັນອັນເລັ່ງດ່ວນໃນການ ປະຕິຮູບ ແລະ ທີ່ລັດຕ້ອງໄດ້ນຳໃຊ້ວິທີການເຊັ່ນ: ການຝຶກອົບຮົມ ແລະ ການເລື່ອນຕຳແໜ່ງຂອງແມ່ຍິງໃຫ້ໄດ້ຢູ່ຕຳແໜ່ງທີ່ມີອຳນາດ ໃນການຕັດສິນໃຈ. ນອກຈາກນີ້ ມັນຍັງໄດ້ເວົ້າເຖິງ ໜ້າທີ່ໆຜູ້ທີ່ເຮັດວຽກດ້ານສື່ຈະຕ້ອງຊ່ວຍໃຫ້ບັນລຸ 2 ຈຸດປະສົງຍຸດທະສາດທີ່ ຖືກຮ່າງໄວ້ ນັ້ນຄືໃນການເພີ່ມການມີສ່ວນຮ່ວມ ແລະ ການເຂົ້າ ເຖິງຂອງແມ່ຍິງໃນການສະແດງຄວາມຄິດເຫັນແລະ ໃນການ ຕັດສິນໃຈ ໃນ ແລະຜ່ານສື່ ແລະ ເຕັກໂນໂລຢີໃໝ່ ຂອງການ ສື່ສານ; ແລະໃນການສົ່ງເສີມການນຳສະເໜີແມ່ຍິງທີ່ທ່ຽງທຳ ແລະ ບໍ່ແມ່ນແຕ່ແງ່ມຸມດຽວຕາຍຕົວໃນສື່. ວິທະຍຸຊຸມຊົນ ຄວນຈະຢູ່ໃນແຖວໜ້າໃນການເຮັດໃຫ້ບັນລຸຈຸດປະສົງເຫລົ່ານີ້.

ການເກີດມີອິນເຕີເນັດ ແລະ ການສື່ສານຜ່ານອິນເຕີເນັດ ໄດ້ເປີດໂອກາດໃຫ້ແມ່ຍິງ ໃນການເຊື່ອມໂຍງຫາກັນ ແລະ ໃນການສື່ສານກັນກ່ຽວກັບຄວາມສະເໝີພາບຂອງຍິງ-ຊາຍ. ແຕ່ການເຂົ້າເຖິງເຕັກໂນໂລຢີໃນທຸກຮູບແບບຂອງແມ່ຍິງສ່ວນໃຫຍ່, ໂດຍສະເພາະ ແມ່ຍິງທີ່ຢູ່ໃນປະເທດທີ່ພວມພັດທະນາ, ແມ່ນມີຈຳກັດທີ່ສຸດ. ຄວາມຕ້ອງການໃນການເຂົ້າເຖິງເຕັກໂນໂລຢີຂອງແມ່ຍິງ ແລະ ປະຊາຊົນຢູ່ໃນບັນດາປະເທດທີ່ພວມພັດທະນາ ຕ້ອງໄດ້ຖືກເອົາໃຈໃສ່ ບໍ່ສະເພາະແຕ່ໂດຍຜູ້ທີ່ເຮັດວຽກວິທະຍຸຊຸມຊົນເທົ່ານັ້ນ ແຕ່ຍັງຕ້ອງລວມເຖິງຜູ້ທີ່ສ້າງນະໂຍບາຍໃນລະດັບຕ່າງໆຂອງສັງຄົມ, ຕັ້ງແຕ່ໜ່ວຍງານຂອງລັດຖະບານພາຍໃນ ແລະ ອົງການຈັດຕັ້ງສາກົນຕ່າງໆ. ແຕ່ວ່າໃນຄວາມເປັນຈິງ, ການສ້າງນະໂຍບາຍຕ່າງໆບໍ່ໄດ້ໃສ່ໃຈຄວາມຕ້ອງການຂອງແມ່ຍິງໃນການເຂົ້າເຖິງອິນເຕີເນັດ, ເຊິ່ງເຮັດໃຫ້ເກີດສະພາບແວດລ້ອມທີ່ຖືກສ້າງໂດຍ ແລະ ສຳລັບຜູ້ຊາຍເປັນສ່ວນໃຫຍ່, ແລະ ນີ້ເຮັດໃຫ້ເກີດມີຊ່ອງຫວ່າງທີ່ເພີ່ມຂຶ້ນໃນການເຂົ້າເຖິງຂໍ້ມູນຂ່າວສານ ຂອງແມ່ຍິງແລະຜູ້ຊາຍ ແລະ ການນຳສະເໜີແມ່ຍິງໃນດ້ານລົບໃນສື່ຕ່າງໆ, ການນຳໃຊ້ຮ່າງກາຍຂອງແມ່ຍິງເປັນຕົວຂາຍສິນຄ້າ ແລະ ວັດຖຸຕອບສະໜອງທາງເພດ. ວິທະຍຸຊຸມຊົນສາມາດເຮັດບົດບາດ ໃນການນຳສະເໜີບັນຫາເຫລົ່ານີ້ ໃຫ້ມີການສົນທະນາດ້ານນະໂຍບາຍ, ແລະ ໃນການສົ່ງເສີມບົດບາດຂອງແມ່ຍິງ ທັງໃນການນຳໃຊ້ຂ່າວສານ ແລະ ເຕັກໂນໂລຢີການສື່ສານ, ແລະ ໃນການແກ້ໄຂຄວາມບໍ່ສົມດຸນໃນດ້ານນີ້.

ໃນລະດັບສາກົນ, ບົດບາດຂອງແມ່ຍິງໃນການປ້ອງກັນ ແລະ ແກ້ໄຂຄວາມຄັດແຍ່ງ ແລະ ໃນການສ້າງຄວາມສະຫງົບສຸກ ໄດ້ຖືກຍອມຮັບຜ່ານມະຕິ 1325 ຂອງຄະນະກຳມະການຄວາມໝັ້ນຄົງ ຂອງອົງການສະຫະປະຊາຊາດ (United Nations Security Council resolution 1325). ວິທະຍຸຊຸມຊົນມີໜ້າທີ່ໃນການຊ່ວຍຮັບປະກັນການມີປະກອບສ່ວນຂອງແມ່ຍິງ ໃນສະຖານະການເຫລົ່ານີ້, ໂດຍການໃຫ້ພື້ນທີ່ສຳລັບແມ່ຍິງ ໃນການສະແດງຄວາມຄິດເຫັນ ໃນຂະບວນການກໍ່ສ້າງຄວາມສະຫງົບສຸກ ແລະໃນການຕອບສະໜອງຕາມຄວາມຕ້ອງການສະເພາະຂອງແມ່ຍິງ ໃນສະພາບການທີ່ມີ ຄວາມຄັດແຍ່ງ.

ວິທະຍຸຊຸມຊົນມີໜ້າທີ່ໃນການແກ້ໄຂຄວາມບໍ່ດຸ່ນດ່ຽງ ແລະ ໃນການອຳນວຍຄວາມສະດວກໃຫ້ກັບການມີສ່ວນຮ່ວມຂອງແມ່ຍິງ ໃນທຸກຂັ້ນຕອນຂອງການຕັດສິນໃຈແລະໃນການຜະລິດລາຍການ, ເພື່ອຮັບປະກັນວ່າຄວາມຄິດເຫັນແລະບັນຫາຂອງແມ່ຍິງແມ່ນເປັນສ່ວນໜຶ່ງຂອງວາລະຂ່າວປະຈຳວັນ, ເພື່ອວ່າແມ່ຍິງຈະຖືກນຳສະເໜີໃນດ້ານບວກ ໃນຖານະທີ່ ເປັນສະມາຊິກຂອງສັງຄົມທີ່ຕື່ນຕົວ, ແລະ ເພື່ອຊ່ວຍແມ່ຍິງໃນການມີທັກສະດ້ານເຕັກນິກ ແລະ ມີຄວາມໝັ້ນໃຈ ໃນການກຳນົດວິທີການທີ່ພວກເຂົາສື່ສານ. ພ້ອມກັນນີ້, ສະຖານີຍັງມີໜ້າທີ່ໃນການຈັດຕັ້ງປະຕິບັດ ແລະ ບັງຄັບໃຊ້ນະໂຍບາຍດ້ານຈັນຍາບັນເຊິ່ງລວມມີການເຄົາລົບແມ່ຍິງ ແລະ ຄວາມສະເໝີພາບ ເຊິ່ງຖືເປັນສ່ວນສຳຄັນໜຶ່ງຂອງສະຖານີ. ນະໂຍບາຍດ້ານບົດບາດຍິງ-ຊາຍສຳລັບວິທະຍຸຊຸມຊົນສະບັບນີ້ ຈະເປັນເຄື່ອງມືໃນການຈັດຕັ້ງປະຕິບັດຄວາມສະເໝີພາບຂອງຍິງ-ຊາຍ ໃນສະຖານີ. ນີ້ຄວນຈະເປັນສ່ວນໜຶ່ງຂອງນະໂຍບາຍດ້ານຈັນຍາບັນ ແລະ ກົດລະບຽບຂອງສະຖານີ.

**ມາດຕາ I: ການເຂົ້າເຖິງຄື້ນກະຈາຍສຽງຂອງແມ່ຍິງ**

ແມ່ຍິງຕ້ອງໄດ້ເຂົ້າເຖິງຄື້ນກະຈາຍສຽງ ທັງທາງດ້ານຄວາມສາມາດໃນການຜະລິດລາຍການຂອງຕົນເອງ ກ່ຽວກັບການເມືອງ, ສັງຄົມ ແລະ ຄວາມບັນເທີງ, ແລະ ໄດ້ມີລາຍການ ທີ່ພົວພັນເຖິງບັນຫາແມ່ຍິງ.

ນີ້ຮຽກຮ້ອງໃຫ້ມີທັດສະນະຄະຕິທີ່ດີໃນການໃຫ້ການຝຶກອົບຮົມກັບແມ່ຍິງ, ການໃຫ້ພື້ນທີ່ກັບແມ່ຍິງໃນການຜະລິດລາຍການ ແລະ ການຮັບປະກັນໃຫ້ມີສະພາບແວດລ້ອມທີ່ປອດໄພ ແລະ ເອື້ອອຳນວຍແກ່ການເຮັດວຽກ ໃນແລະນອກສະຖານີ. ນີ້ລວມມີການພັດທະນາກົດລະບຽບຕ້ານການລ່ວງລ້ຳທາງເພດ (ດ້ວຍຄຳເວົ້າ ຫລື ຮ່າງກາຍ) ເພື່ອເປັນການປົກປ້ອງແມ່ຍິງຈາກການລ່ວງເກີນທາງເພດ ໃນທຸກຮູບແບບ, ເຊິ່ງລວມທັງກົນໄກການຮ້ອງທຸກ. ພ້ອມກັນນີ້ ແມ່ຍິງຍັງມີສິດໃນການເຮັດວຽກ ໂດຍປາດສະຈາກຄວາມຢ້ານກົວ, ສະນັ້ນ ການຝຶກອົບຮົມທີ່ເໝາະສົມກ່ຽວກັບຄວາມປອດໄພ ແລະ ການປ້ອງກັນຕົວ, ການທີ່ບໍ່ມີການຍ່ອນຍານຕໍ່ການລ່ວງລະເມີດກຽດສັກສີຂອງແມ່ຍິງ ແລະ ການຊ່ວຍເຫລືອແມ່ຍິງຈັດການກັບໄພຂົ່ມຂູ່ທີ່ມາຈາກທັງພາຍໃນແລະນອກສະຖານີ ແມ່ນເປັນສ່ວນສຳຄັນໃນການຊ່ວຍໃຫ້ແມ່ຍິງ ໄດ້ເຂົ້າເຖິງຄື້ນກະຈາຍສຽງ.

ໃນດ້ານວັດທະນະທຳ, ບາງຄັ້ງມັນເປັນສິ່ງທີ່ຍາກ ສຳລັບແມ່ຍິງໃນການທີ່ຈະເຂົ້າເຖິງຄື້ນກະຈາຍສຽງ ຍ້ອນວ່າບໍ່ສາມາດເດີນທາງຄົນດຽວ ຫລື ເດີນທາງໃນເວລາຄ່ຳຄືນ. ນີ້ຮຽກຮ້ອງໃຫ້ມີຄວາມພະຍາຍາມ ເພື່ອຮັບປະກັນວ່າ ແມ່ຍິງສາມາດຜ່ານຜ່າອຸປະສັກເຫລົ່ານີ້ໄດ້, ຕົວຢ່າງ: ໂດຍການນຳໃຊ້ວິທະຍຸເຄື່ອນທີ່ ຫລື ໂດຍການນຳໃຊ້ພາຫະນະເດີນທາງຮ່ວມກັນ ຫລື ໂດຍການໃຫ້ມີຜູ້ຕິດຕາມ. ການຝຶກອົບຮົມດ້ານເຕັກນິກພິເສດສຳລັບແມ່ຍິງ ຫລື ວັນສຳລັບແມ່ຍິງເທົ່ານັ້ນໃນສະຖານີ ແມ່ນເປັນວິທີການຢ່າງໜຶ່ງໃນການແກ້ໄຂປັນຫາກ່ຽວກັບຄວາມໝັ້ນໃຈຂອງແມ່ຍິງ. ຈົນກວ່າວ່າແມ່ຍິງຈະໄດ້ຮັບຄວາມສະເໝີພາບ, ສະຖານີຄວນຕ້ອງໃຫ້ມີໂຕະເຮັດວຽກຂອງແມ່ຍິງໃນສະຖານີ ເພື່ອສະໜັບສະໜູນການມີສ່ວນຮ່ວມຂອງແມ່ຍິງ ແລະ ເພື່ອປ້ອງກັນຈາກການຖືກປະຕິບັດທີ່ບໍ່ເປັນທຳໃນທຸກຮູບແບບ ພາຍໃນສະຖານີ ແລະ ໃນເວລາອອກອາກາດ, ແລະ ເພື່ອເປັນການສ້າງສະພາບແວດລ້ອມທີ່ເອື້ອອຳນວຍ ສຳລັບການມີສ່ວນຮ່ວມທີ່ເທົ່າທຽມຂອງແມ່ຍິງ.

**ມາດຕາ II: ການນຳສະເໜີແມ່ຍິງໃນລາຍການ**

ຊຸກຍູ້ການນຳສະເໜີແມ່ຍິງໃນຫລາກຫລາຍດ້ານ, ແລະ ບໍ່ເນັ້ນໜັກໃສ່ສະເພາະບົດບາດທີ່ຖືກຖືເປັນຕົວແບບຕາຍຕົວສຳລັບແມ່ຍິງ, ເຊັ່ນບົດບາດພາຍໃນຄອບຄົວ.

ຮັບປະກັນວ່າທຸກຄົນ, ໂດຍບໍ່ຈຳແນກເພດ, ຊົນເຜົ່າ, ຊົນຊັ້ນ...ຈະໄດ້ຮັບການປະຕິບັດດ້ວຍຄວາມເຄົາລົບແລະກຽດສັກສີ ໃນທຸກໆດ້ານໃນເນື້ອໃນຂອງລາຍການທີ່ອອກອາກາດ, ບໍ່ວ່າຈະເປັນລາຍການ ຫລືໂຄສະນາທີ່ອອກອາກາດ. ນີ້ລວມມີການຮັບປະກັນວ່າ ບໍ່ວ່າຜູ້ຊາຍຫລືແມ່ຍິງ ຈະບໍ່ຖືກນຳສະເໜີເປັນຄືກັບວັດຖຸສິ່ງຂອງ. ທັດສະນະຂອງແມ່ຍິງ ຄວນຈະຖືກພິຈາລະນາເຂົ້າໃນທຸກຂະບວນການຂອງການຜະລິດລາຍການ.



ແຕ່ແນວໃດກໍ່ຕາມ, ລາຍການພິເສດຄວນຖືກຈັດແບ່ງໃຫ້ກັບແມ່ຍິງ. ໃນຂະນະດຽວກັນ, ນັກກະຈາຍສຽງແມ່ຍິງກໍ່ບໍ່ຄວນຖືກຈຳກັດແຕ່ສະເພາະ ສຳລັບລາຍການແມ່ຍິງເຫລົ່ານີ້ເທົ່ານັ້ນ.

ແມ່ຍິງມັກຖືກເບິ່ງຂ້າມໂດຍສື່ ໃນດ້ານຄວາມຊ່ຽວຊານ ແລະ ຄວາມຄິດເຫັນທີ່ເປັນຊ່ຽວຊານ. ແຫລ່ງຂໍ້ມູນທີ່ຫລາກຫລາຍ, ການນຳສະເໜີຈາກທຸກພາກສ່ວນຂອງສັງຄົມ, ຄວນຈະຖືກນຳໃຊ້ເຂົ້າໃນຂ່າວ ແລະ ລາຍການວິເຄາະຕ່າງໆ. ເພື່ອເຮັດໃຫ້ສິ່ງເຫລົ່ານີ້ເກີດຂື້ນ, ມັນອາດຈະເປັນປະໂຫຍດ ທີ່ຈະມີປື້ມຂໍ້ມູນຕິດຕໍ່ແມ່ຍິງທີ່ເປັນຊ່ຽວຊານໃນຫລາກຫລາຍສາຂາອາຊີບທີ່ສາມາດຖືກໃຊ້ເປັນຈຸດອ້າງອີງໄດ້.



**ມາດຕາ III: ຄວາມຕ້ອງການພິເສດຂອງແມ່ຍິງຊົນເຜົ່າ**

ຄວາມຫລາກຫລາຍດ້ານປະສົບການຂອງແມ່ຍິງຈຳເປັນຕ້ອງໄດ້ຮັບການຍອມຮັບ, ແລະ ພື້ນທີ່ຄວນຖືກສ້າງຂື້ນສຳລັບແມ່ຍິງ ຜູ້ທີ່ຖືກປະຕິບັດຢ່າງບໍ່ເປັນທຳ, ຖືກກົດຂີ່ ຫລື ຖືກລືມ ຈາກສື່ຂອງລັດ ແລະເອກະຊົນ. ນີ້ລວມມີການຕອບສະໜອງສິ່ງທີ່ຈຳເປັນພິເສດ ສຳລັບແມ່ຍິງທີ່ມີຄວາມພິການ, ແມ່ຍິງຊົນເຜົ່າ....



ຮັບປະກັນວ່າແມ່ຍິງແລະປະຊາຊົນ ເຂົ້າເຖິງຄື້ນກະຈາຍສຽງດ້ວຍຄວາມຫລາກຫລາຍ ໂດຍສະເພາະ ໃຫ້ເວລາອອກອາກາດກັບແມ່ຍິງຊົນເຜົ່າ ໄດ້ສົນທະນາບັນຫາຂອງພວກເຂົາໃນສະພາບແວດລ້ອມທີ່ເອື້ອອຳນວຍ, ປອດໄພ ແລະ ບໍ່ມີການເລືອກປະຕິບັດທີ່ບໍ່ເປັນທຳ.



ການຝຶກອົບຮົມແລະການສ້າງຂີດຄວາມສາມາດໃຫ້ກັບແມ່ຍິງທີ່ມາຈາກຫລາກຫລາຍພື້ນຖານ ແລະ ຄວາມຕ້ອງການ ອາດຈະພິເສດ, ແລະການສະໜັບສະໜູນດ້ານການເງິນ ອາດຈະຖືກລວມເຂົ້ານຳເພື່ອຮັບປະກັນວ່າຄວາມຕ້ອງການພິເສດເຫລົ່ານີ້ໄດ້ຖືກຕອບສະໜອງ.

**ມາດຕາ IV: ການມີສ່ວນປະກອບຂອງແມ່ຍິງໃນການຈັດການໃນທຸກລະດັບຂອງສະຖານີ**



ໂດຍປົກກະຕິແລ້ວ, ວິທະຍຸຊຸມຊົນຈະມີສ່ວນປະກອບຂອງແມ່ຍິງຫລາຍກວ່າວິທະຍຸ ຂອງລັດ ຫລື ຂອງເອກະຊົນ. ແຕ່ວ່າ, ແມ່ຍິງກໍ່ຍັງມີສ່ວນປະກອບທີ່ໜ້ອຍຫລາຍ ໂດຍສະເພາະໃນດ້ານອຳນາດການຕັດສິນໃຈ ແລະ ດ້ານເຕັກນິກ, ແລະ ມີສະຖານີຫລາຍໆແຫ່ງຍັງບໍ່ທັນມີສ່ວນປະກອບຂອງແມ່ຍິງທີ່ພຽງພໍ.



ເພື່ອຮັບປະກັນວ່າ ແມ່ຍິງຈະຖືກປະກອບເຂົ້າຢ່າງມີຄວາມໝາຍໃນທຸກລະດັບຂອງສະຖານີວິທະຍຸຊຸມຊົນ, ຈຳນວນສຳລັບ ການມີສ່ວນຮ່ວມ ຄວນຖືກຕັ້ງໄວ້ ສຳລັບການເປັນເຈົ້າຂອງ, ການຈັດການ ແລະ ການຜະລິດລາຍການ, ລວມທັງການມີສ່ວນຮ່ວມຂອງແມ່ຍິງໃນການຈັດການດ້ານເຕັກນິກ. ເປົ້າໝາຍສູງສຸດແມ່ນການບັນລຸຄວາມເທົ່າທຽມກັນລະຫວ່າງເພດຍິງແລະເພດຊາຍ, ແຕ່ວ່າຈຳນວນສ່ວນປະກອບຂອງແມ່ຍິງ ຢ່າງໜ້ອຍ 30 ສ່ວນຮ້ອຍຄວນຖືກກຳນົດໄວ້. ເພື່ອໃຫ້ບັນລຸໄດ້ຈຳນວນດັ່ງກ່າວ ມັນເປັນສິ່ງສຳຄັນທີ່ຕ້ອງໄດ້ລົງທຶນໃສ່ດ້ານທັກສະຂອງແມ່ຍິງ, ໃນການໃຫ້ການຝຶກອົບຮົມດ້ານການຈັດການແລະການເປັນຜູ້ນຳ ໂດຍເລັ່ງໃສ່ ການສະໜັບສະໜູນແມ່ຍິງໃຫ້ບັນລຸຄວາມສະເໝີພາບ ພາຍໃນສະຖານີ.



ການປະກອບສ່ວນຂອງແມ່ຍິງບໍ່ສາມາດວັດແທກໄດ້ໂດຍຕົວເລກຂອງແມ່ຍິງທີ່ມີສ່ວນກ່ຽວຂ້ອງກັບສະຖານີ. ແມ່ຍິງຄວນຖືກປະກອບເຂົ້າໃນໜ່ວຍງານຜະລິດລາຍການ, ເປັນເຈົ້າຂອງ ແລະ ທີ່ມີອຳນາດຕັດສິນໃຈ ໃນສະຖານີ. ສິ່ງເຫລົ່ານີ້ຕ້ອງໄດ້ຖືກປະກອບສ້າງຂຶ້ນ ເພື່ອຮັບປະກັນວ່າ ແມ່ຍິງຈະສາມາດມີສ່ວນຮ່ວມຢ່າງມີຄວາມໝາຍໃນຂະບວນການສ້າງນະໂຍບາຍ ເຊິ່ງລວມມີສະພາບແວດລ້ອມທີ່ເອື້ອອຳນວຍ ແລະ ໃຫ້ຄວາມສຳຄັນ ຕໍ່ວັດທະນະທຳ. ມັນມີຫລາຍປັດໃຈທີ່ສາມາດອຳນວຍຄວາມສະດວກໃຫ້ກັບການມີສ່ວນຮ່ວມຂອງແມ່ຍິງ. ນີ້ລວມມີການຮັບປະກັນການດູແລລູກ, ເວລາເຮັດວຽກທີ່ຍືດຍຸ່ນໄດ້ ແລະ ຕາຕະລາງອອກອາກາດທີ່ແທດເໝາະກັບໜ້າທີ່ຮັບຜິດຊອບອື່ນໆຂອງແມ່ຍິງ, ແສງສະຫວ່າງຫລືຄວາມປອດໄພທີ່ພຽງພໍໃນສະຖານີໃນເວລາປະຊຸມ ແລະ ອອກອາກາດ, ຫລື ພາຫະນະເດີນທາງທີ່ປອດໄພ ສຳລັບແມ່ຍິງທີ່ຕ້ອງໄດ້ເດີນທາງໄປແລະກັບຈາກສະຖານີ.



ຢ່າງໜ້ອຍ ຈຳນວນເຄິ່ງໜຶ່ງຂອງຜູ້ເຂົ້າຮ່ວມຝຶກອົບຮົມຄວນຖືກສະຫງວນໄວ້ສຳລັບແມ່ຍິງ.

**ມາດຕາ V: ການນຳໃຊ້ເຕັກໂນໂລຢີທີ່ເໝາະສົມ**

ໃນຂະນະທີ່ແມ່ຍິງຈຳນວນໜຶ່ງມີຄວາມຊຳນານໃນການນຳໃຊ້ເຕັກໂລໂລຢີເພື່ອການສື່ສານ, ແມ່ຍິງສ່ວນໃຫຍ່ຍັງບໍ່ມີຄວາມຊຳນານໃນດ້ານດັ່ງກ່າວ. ໂດຍປົກກະຕິແລ້ວ, ແມ່ຍິງຈະຖືກກີດກັ້ນ ຈາກການນຳໃຊ້ເຕັກໂນໂລຢີ, ເຊັ່ນການນຳໃຊ້/ຄວບຄຸມເຄື່ອງເຕັກນິກໃນຫ້ອງສົ່ງຂອງວິທະຍຸ. ມັນເປັນສິ່ງສຳຄັນທີ່ຕ້ອງໄດ້ຮັບຮູ້ຄວາມບໍ່ເທົ່າທຽມກັນຂອງເພດ ໃນການເຂົ້າເຖິງເຕັກໂນໂລຢີ ແລະຫາທາງແກ້ໄຂບັນຫາດັ່ງກ່າວ ໂດຍຜ່ານທັງການຝຶກອົບຮົມໂດຍແລະສຳລັບແມ່ຍິງ ແລະ ການລົງທຶນໃສ່ເຕັກໂນໂລຢີທີ່ເໝາະສົມ.

ເຕັກໂນໂລຢີທີ່ເໝາະສົມລວມມີ ໂປຼແກຼມຂອງຄອມພິວເຕີ້ (ຊອບແວ໌) ທີ່ຖືກພັດທະນາຂຶ້ນໃຫ້ໃຊ້ໄດ້ໂດຍບໍ່ເສຍຄ່າ; ການຈັດວາງຫ້ອງສົ່ງທີ່ງ່າຍໃນການນຳໃຊ້/ຄວບຄຸມ ສຳລັບແມ່ຍິງ (ຕົວຢ່າງ: ຢ່າລືມວ່າ, ໂດຍທົ່ວໄປ ແມ່ຍິງຈະເຕ້ຍກວ່າຜູ້ຊາຍ) ແລະ ສຳລັບທຸກຄົນ (ລວມທັງຄົນພິການ); ພ້ອມທັງເອກະສານໃນການຝຶກອົບຮົມ ສາມາດນຳໃຊ້ ແລະເຂົ້າໃຈໄດ້ງ່າຍ (ເຊັ່ນ: ເອກະສານຖືກແປເປັນພາສາທ້ອງຖິ່ນ ແລະ ເອກະສານເປັນຮູບພາບສຳລັບຄົນກືກໜັງສື...).

ນອກຈາກນີ້ ມັນຍັງມີຄວາມຈຳເປັນອັນເລັ່ງດ່ວນ ໃນການຊຸກຍູ້ໃຫ້ມີໂຄງການລິເລີ່ມ ໃນການສຶກສາຄົ້ນຄ້ວາແລະ ສະໜັບສະໜູນ ທີ່ຊ່ວຍຄົນທຸກຍາກແລະຄົນກືກໜັງສື ໃນຄວາມຕ້ອງການດ້ານການສື່ສານຂອງພວກເຂົາ, ໂດຍການພັດທະນາເຕັກໂນໂລຢີ ທີ່ສາມາດຖືກນຳໃຊ້ໂດຍຄົນກືກໜັງສື ແລະ ໂດຍການເຮັດໃຫ້ເຕັກໂນໂລຢີມີລາຄາຖືກ.

**ມາດຕາ VI: ການໃຫ້ທຶນ ແລະ ການສ້າງຂີດຄວາມສາມາດ ສຳລັບວິທະຍຸຂອງແມ່ຍິງ**

ການສ້າງຂີດຄວາມສາມາດ ແມ່ນອົງປະກອບສຳຄັນເພື່ອບັນລຸຄວາມເທົ່າທຽມກັນຂອງຍິງ-ຊາຍ. ນີ້ບໍ່ສະເພາະແຕ່ການສ້າງຂີດຄວາມສາມາດສຳລັບແມ່ຍິງທີ່ກ່ຽວຂ້ອງກັບສະຖານີ, ແຕ່ຍັງສຳລັບຜູ້ຊາຍ ແລະ ແມ່ຍິງ ເພື່ອເຮັດໃຫ້ພວກເຂົາສາມາດເຮັດວຽກຮ່ວມກັນໃນການສ້າງ ສະພາບແວດລ້ອມທີ່ເອື້ອອຳນວຍ ແລະປອດໄພ, ສະພາບແວດລ້ອມທີ່ທຸກຄົນຮູ້ສຶກສາມາດປະກອບສ່ວນສຸດຄວາມສາມາດຂອງຕົນ ໃນທຸກໆດ້ານຂອງຄວາມສຳເລັດຂອງສະຖານີ.

ໃນເວລາດຽວກັນ ການຝຶກອົບຮົມທີ່ໃຫ້ຄວາມສຳຄັນ ຕໍ່ບົດບາດຍິງ-ຊາຍ ຄວນຖືກຈັດຂຶ້ນ ສຳລັບທຸກໆຄົນໃນສະຖານີ ເພື່ອຊ່ວຍໃຫ້ຜູ້ຊາຍແລະແມ່ຍິງ ຮັບຮູ້ພຶດຕິກຳທີ່ຖືເພດຊາຍ ເປັນຫລັກ ແລະ ການນຳສະເໜີທີ່ບໍ່ເປັນທຳ, ແລະ ສາມາດພັດທະນາຄວາມສຳພັນທີ່ມີຄວາມເທົ່າທຽມກັນທາງດ້ານເພດ ແລະ ວິທີການລາຍງານຂ່າວທີ່ເປັນທຳແລະ ບໍ່ເລືອກປະຕິບັດຕໍ່ເພດໃດເພດໜຶ່ງ.

ເຖິງແມ່ນວ່າຫລາຍໆສະຖານີມີຄວາມຕັ້ງໃຈທີ່ດີທີ່ຈະໃຫ້ບັນລຸຄວາມສະເໝີພາບຂອງຍິງ-ຊາຍ, ແຕ່ວ່າບໍ່ຄ່ອຍມີການໃຫ້ທຶນ ຫລື ການສ້າງຂີດຄວາມສາມາດ ເພື່ອໃຫ້ບັນລຸເປົ້າໝາຍດັ່ງກ່າວ. ກອງທຶນສະເພາະ ແລະ ເງິນ ຄວນຖືກແຍກໄວ້ຕ່າງຫາກ ເພື່ອໃຊ້ໃນການຝຶກອົບຮົມໃຫ້ກັບແມ່ຍິງໃນດ້ານເຕັກນິກ, ການຜະລິດລາຍການ ແລະ ການຈັດການ; ເພື່ອລົງທຶນໃສ່ໃນການສ້າງເງື່ອນໄຂອຳນວຍຄວາມສະດວກໃນສະຖານີເພື່ອຊ່ວຍໃຫ້ແມ່ຍິງຮູ້ສຶກປອດໄພ (ເຊັ່ນ: ອຸປະກອນ ໃຫ້ແສງສະຫວ່າງ ແລະ ຄວາມປອດໄພ); ແລະ ເພື່ອໃຫ້ໂອກາດເພື່ອສ້າງເຄືອຂ່າຍສຳລັບແມ່ຍິງທີ່ກ່ຽວຂ້ອງກັບສະຖານີ.

ໃນດ້ານລະບົບການຈັດຕັ້ງຂອງສະຖານີ, ມັນອາດເປັນສິ່ງຈຳເປັນທີ່ຈະຕ້ອງມີແມ່ຍິງ ຢູ່ໃນຄະນະຮັບຜິດຊອບ ຫລື ຄະນະຊີ້ນຳ ຜູ້ທີ່ສາມາດປະເມີນຕີລາຄາຄວາມຕ້ອງການຂອງສະຖານີ ແລະ ຈັດຕັ້ງປະຕິບັດລາຍການທີ່ຈະຊ່ວຍໃຫ້ບັນລຸຄວາມສະເໝີພາບຂອງຍິງ-ຊາຍ, ຕົວຢ່າງ, ໂດຍໃຫ້ມີໂຕະເຮັດວຽກ ຂອງແມ່ຍິງ.

WOMEN'S INTERNATIONAL NETWORK
RÉSEAU INTERNATIONAL DE FEMMES
RED INTERNACIONAL DE MUJERES
AMARC WIN

ທີ່ຢູ່: 705 Rue Bourget #100, Montreal, QuebecCANADA, H4C 2M6,
Tel: +1-514-982-0351, Fax: +1-514-849-7129
secretariat@si.amarc.org, http://win.amarc.org/

ເນື້ອໃນຂອງນະໂຍບາຍສະບັບນີ້ມາຈາກສະມາຊິກຂອງ AMARCWIN Asia Pacific ແລະ ໄດ້ຮັບການອະນຸມັດຈາກ AMARC-WIN International.

ທີມງານຮ່າງນະໂຍບາຍສະບັບນີ້: Geeta Malhotra, READ (ອິນເດຍ); Nimmi Chauhan, DRISHTI Media Collective (ອິນເດຍ); Sonia Randhawa, AMARC Asia Pacific Board (ອົດສະຕາລີ); Tamara Aqrabawe, INTERNEWS (ອາຟການິດສຖານ); ແລະ Bianca Miglioretto, ISIS INTERNATIONAL (ຟີລິບປິນ)

**ປະສານງານ: Isis International,** www.isiswomen.org

ແປຈາກພາສາອັງກິດເປັນພາສາລາວໂດຍ: ໄຊສິງຄາມ ອິນດວງຈັນທີ,
**ວິທະຍຸຊຸມຊົນເມືອງຄູນເພື່ອການພັດທະນາ, ຊຽງຂວາງ, ສປປ ລາວ.**
ເວບໄຊທ໌: **www.khouncommunityradio-xiengkhouang.blogspot.com**